ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----=== 000 ===-----

ຄະນະກຳມະການຄຸ້ມຄອງຫຼັກຊັບ ເລກທີ 003 /ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 18 FEB 2014

# ລະບຽບ
# ວ່າດ້ວຍຄວາມພຽງພໍຂອງທຶນ ຂອງບໍລິສັດຫຼັກຊັບ

- ອີງຕາມກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ ລົງວັນທີ 10 ທັນວາ 2012;
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 188/ນຍ ລົງວັນທີ 24 ກໍລະກົດ 2013;
- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 013/ຄຄຊ, ລົງວັນທີ 17 ທັນວາ 2013.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ອອກລະບຽບ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ລະບຽບສະບັບນີ້ ຜັນຂະຫຍາຍກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ, ລົງວັນທີ 10 ທັນວາ 2012 ມາດຕາ 67, 68, 71, 137, 166, 168 ແລະ ມາດຕາ 171 ເພື່ອກຳນົດຫຼັກການ, ລະບຽບການ, ມາດຕະການ, ສູດການຄິດໄລ່ ກ່ຽວກັບການຮັກສາອັດຕາສ່ວນຄວາມພຽງພໍຂອງທຶນ ຂອງບໍລິສັດຫຼັກຊັບ ເພື່ອເປັນການປ້ອງກັນ ແລະ ບໍລິຫານຄວາມສ່ຽງທາງດ້ານການເງິນ ແນໃສ່ຮັກສາຄວາມໝັ້ນຄົງ ໃນການເຄື່ອນໄຫວທຸລະກິດ ຂອງບໍລິສັດຫຼັກຊັບ.

**ມາດຕາ 2 ຄວາມພຽງພໍຂອງທຶນ**

ຄວາມພຽງພໍຂອງທຶນ ໝາຍເຖິງຄວາມສາມາດຂອງບໍລິສັດຫຼັກຊັບ ໃນການຊຳລະໜີ້ໄລຍະສັ້ນ ທີ່ມີກຳນົດເວລາຊຳລະພາຍໃນໜຶ່ງປີ. ໜີ້ໄລຍະສັ້ນ ແມ່ນລວມໜີ້ສິນທີ່ສະແດງອອກໃນໃບສະຫຼຸບຊັບສົມບັດ ແລະ ນອກໃບສະຫຼຸບຊັບສົມບັດຂອງບໍລິສັດຫຼັກຊັບ ທີ່ເກີດຈາກການເຄື່ອນໄຫວທຸລະກິດຂອງບໍລິສັດຫຼັກຊັບ. ອັດຕາສ່ວນຄວາມພຽງພໍຂອງທຶນ ຂຽນຫຍໍ້ເປັນພາສາອັງກິດ ແມ່ນ NCR (Net Capital Ratio).

**ມາດຕາ 3 ຂອບເຂດການນຳໃຊ້**

ລະບຽບສະບັບນີ້ ນຳໃຊ້ຕໍ່ກັບ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ສະມາຊິກສະພາບໍລິຫານ ແລະ ພະນັກງານ ຂອງບໍລິສັດຫຼັກຊັບ, ບໍລິສັດຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວ ພາຍໃຕ້ກົດໝາຍຂອງ ສປປ ລາວ.

## ໝວດທີ 2
## ອັດຕາສ່ວນຄວາມພຽງພໍຂອງທຶນ

**ມາດຕາ 4 ການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ**

ອັດຕາສ່ວນຄວາມພຽງພໍຂອງທຶນ ແມ່ນອັດຕາສ່ວນທີ່ໄດ້ຈາກຜົນການຄິດໄລ່ ຕາມສູດຄິດໄລ່ ດັ່ງນີ້:

$$\frac{\text{ຊັບສິນທັງໝົດ - ມູນຄ່າຄວາມສ່ຽງຂອງຊັບສິນໝູນວຽນ - ຊັບສິນໄລຍະຍາວ - ໜີ້ສິນທັງໝົດ}}{\text{ໜີ້ສິນທັງໝົດ - ໜີ້ສິນໄລຍະຍາວ + ໜີ້ສິນໄລຍະສັ້ນນອກໃບສະຫຼຸບຊັບສິນບັດ}}$$

ຜົນການຄິດໄລ່ ສະແດງໃຫ້ເຫັນເຖິງລະດັບຄວາມສາມາດ ໃນການຊຳລະໜີ້ໄລຍະສັ້ນ ຂອງບໍລິສັດຫຼັກຊັບ. ບໍລິສັດຫຼັກຊັບ ຕ້ອງຮັກສາອັດຕາສ່ວນຄວາມພຽງພໍຂອງທຶນ ບໍ່ໃຫ້ຕ່ຳກວ່າ ສິບສອງສ່ວນຮ້ອຍ.

ສຳລັບລາຍລະອຽດກ່ຽວກັບການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ໃຫ້ປະຕິບັດຕາມຄຳແນະນຳສະເພາະຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ກຳນົດອອກໃນແຕ່ລະໄລຍະ.

**ມາດຕາ 5 ການລາຍງານ**

ບໍລິສັດຫຼັກຊັບ ມີໜ້າທີ່ລາຍງານ ຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

1. **ການລາຍງານແບບປົກກະຕິ.**
   - 1.1. ຜົນການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນຂອງແຕ່ລະວັນລັດຖະການ ໂດຍໃຫ້ລາຍງານຜ່ານທາງເອເລັກໂຕຣນິກ ພາຍໃນກຳນົດເວລາ ໜຶ່ງວັນ ລັດຖະການ ຕາມແບບຟອມລາຍງານທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ກຳນົດ;
   - 1.2. ຜົນການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນຂອງແຕ່ລະວັນລັດຖະການ ຕາມ ຂໍ້ 1.1 ຂ້າງເທິງ ໂດຍໃຫ້ລາຍງານຜ່ານທາງເອກະສານ ພາຍໃນກຳນົດເວລາ ສິບຫ້າວັນ ຂອງເດືອນຖັດໄປ ຕາມແບບຟອມລາຍງານທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ກຳນົດ.

2. **ການລາຍງານແບບກະທັນຫັນ**
   - 2.1. ຜົນການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ໂດຍໃຫ້ລາຍງານຜ່ານທາງເອກະສານ ພາຍໃນກຳນົດເວລາ ສອງວັນ ລັດຖະການ ກໍລະນີອັດຕາສ່ວນຄວາມພຽງພໍຂອງທຶນ ຫຼຸດລົງຕ່ຳກວ່າຊາວສ່ວນຮ້ອຍ ພ້ອມດ້ວຍສາເຫດທີ່ເຮັດໃຫ້ອັດຕາສ່ວນດັ່ງກ່າວຫຼຸດລົງ ແລະ ສືບຕໍ່ລາຍງານເປັນແຕ່ລະວັນ ຈົນກວ່າຈະສາມາດແກ້ໄຂ ໃຫ້ອັດຕາສ່ວນຄວາມພຽງພໍຂອງທຶນ ຢູ່ໃນລະດັບຊາວສ່ວນຮ້ອຍຂຶ້ນໄປ ເປັນເວລາຢ່າງໜ້ອຍ ຫ້າວັນ ລັດຖະການ ຢ່າງຕໍ່ເນື່ອງ;

2.2. ຜົນການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ໂດຍໃຫ້ລາຍງານຜ່ານທາງເອກະສານ ພາຍໃນກຳນົດເວລາ ໜຶ່ງວັນ ລັດຖະການ ກໍລະນີອັດຕາສ່ວນຄວາມພຽງພໍຂອງທຶນ ຫຼຸດລົງຕ່ຳກວ່າ ສິບສອງສ່ວນຮ້ອຍ ພ້ອມດ້ວຍສາເຫດທີ່ເຮັດໃຫ້ອັດຕາສ່ວນດັ່ງກ່າວຫຼຸດລົງ ແລະ ສືບຕໍ່ລາຍງານເປັນແຕ່ລະວັນ ຈົນກວ່າຈະສາມາດແກ້ໄຂ ໃຫ້ອັດຕາສ່ວນຄວາມພຽງພໍຂອງທຶນ ຢູ່ໃນລະດັບຊາວສ່ວນຮ້ອຍຂຶ້ນໄປ ເປັນເວລາຢ່າງໜ້ອຍ ຫ້າວັນ ລັດຖະການ ຢ່າງຕໍ່ເນື່ອງ;

2.3. ແຜນການແກ້ໄຂບັນຫາ ກ່ຽວກັບອັດຕາສ່ວນຄວາມພຽງພໍຂອງທຶນ ພາຍໃນ ສິບວັນ ລັດຖະການ ໃນກໍລະນີເກີດເຫດການທີ່ໄດ້ກຳນົດໄວ້ໃນ ຂໍ້ 2.1 ແລະ 2.2 ຂອງມາດຕານີ້ ພ້ອມທັງປະຕິບັດຕາມແຜນການແກ້ໄຂບັນຫາໃຫ້ສຳເລັດ ພາຍໃນກຳນົດເວລາ ເກົ້າສິບວັນ ນັບແຕ່ວັນທີ່ອັດຕາສ່ວນຄວາມພຽງພໍຂອງທຶນຫຼຸດລົງຕ່ຳກ່ວາຊາວສ່ວນຮ້ອຍ. ຍົກເວັ້ນກໍລະນີ ສາມາດແກ້ໄຂໃຫ້ອັດຕາສ່ວນຄວາມພຽງພໍຂອງທຶນ ຢູ່ໃນລະດັບຊາວສ່ວນຮ້ອຍ ພາຍໃນກຳນົດເວລາ ສິບວັນ ລັດຖະການ.

ກໍລະນີມີລາຍການທີ່ກ່ຽວພັນກັບອັດຕາສ່ວນຄວາມພຽງພໍຂອງທຶນ ແຕ່ບໍ່ໄດ້ນຳມາຄິດໄລ່ ບໍລິສັດຫຼັກຊັບຕ້ອງລາຍງານເຫດຜົນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ພ້ອມທັງສຳເນົາເອກະສານດັ່ງກ່າວ ຄັດຕິດມາພ້ອມ.

### ມາດຕາ 6 ການເກັບຮັກສາເອກະສານ

ບໍລິສັດຫຼັກຊັບ ຕ້ອງເກັບຮັກສາເອກະສານ ທີ່ກ່ຽວຂ້ອງກັບການລາຍງານ ແລະ ການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ໄວ້ໃຫ້ຄົບຖ້ວນ ຢ່າງໜ້ອຍ ສິບປີ.

### ມາດຕາ 7 ຂໍ້ຫ້າມ

ຫ້າມ ບໍລິສັດຫຼັກຊັບ, ສະມາຊິກສະພາບໍລິຫານ ແລະ ພະນັກງານ ຂອງບໍລິສັດຫຼັກຊັບ ມີພຶດຕິກຳໃດໜຶ່ງບໍ່ວ່າ ທາງກົງ ຫຼື ທາງອ້ອມ ດັ່ງນີ້:

1. ລະເວັ້ນການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ເປັນແຕ່ລະວັນ;
2. ຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ບໍ່ຖືກຕ້ອງ;
3. ລາຍງານການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ຊັກຊ້າ;
4. ສົ່ງແຜນການແກ້ໄຂບັນຫາ ກ່ຽວກັບອັດຕາສ່ວນຄວາມພຽງພໍຂອງທຶນ ຊັກຊ້າ;
5. ແກ້ໄຂບັນຫາ ກ່ຽວກັບອັດຕາສ່ວນຄວາມພຽງພໍຂອງທຶນ ຊັກຊ້າ ບໍ່ທັນເວລາຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
6. ແກ້ໄຂບັນຫາອັດຕາສ່ວນຄວາມພຽງພໍຂອງທຶນ ບໍ່ຖືກຕ້ອງຕາມແຜນການ ຫຼື ບໍ່ສອດຄ່ອງກັບລະບຽບການ;
7. ອັດຕາສ່ວນຄວາມພຽງພໍຂອງທຶນຕ່ຳກວ່າ ສິບສອງສ່ວນຮ້ອຍ.

## ໝວດທີ 3
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 8 ນະໂຍບາຍຕໍ່ຜູ້ມີຜົນງານ

ບໍລິສັດຫຼັກຊັບ, ສະມາຊິກສະພາບໍລິຫານ ແລະ ພະນັກງານ ຂອງບໍລິສັດຫຼັກຊັບ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດລະບຽບສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆ ຕາມລະບຽບການສະເພາະ.

**ມາດຕາ 9 ມາດຕະການຕໍ່ຜູ້ລະເມີດ**

ບໍລິສັດຫຼັກຊັບ, ສະມາຊິກສະພາບໍລິຫານ ແລະ ພະນັກງານ ຂອງບໍລິສັດຫຼັກຊັບ ທີ່ລະເມີດລະບຽບສະບັບນີ້ ທີ່ກໍ່ໃຫ້ເກີດຄວາມເສຍຫາຍແກ່ ລັດ, ສັງຄົມ, ບຸກຄົນ ຫຼື ນິຕິບຸກຄົນ ຈະຖືກປະຕິບັດມາດຕະການ ສຶກສາອົບຮົມ, ປັບໃໝ ແລະ ໂທດເພີ່ມ ໂດຍອີງຕາມເງື່ອນໄຂຂອງການກະທຳຜິດ ແລະ ລະດັບຂອງການລະເມີດ.

**ມາດຕາ 10 ມາດຕະການສຶກສາອົບຮົມ**

ບໍລິສັດຫຼັກຊັບ, ສະມາຊິກສະພາບໍລິຫານ ແລະ ພະນັກງານ ຂອງບໍລິສັດຫຼັກຊັບ ຈະຖືກກ່າວເຕືອນ ແລະ ສຶກສາອົບຮົມ ໃນກໍລະນີມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ອັດຕາສ່ວນຄວາມພຽງພໍຂອງທຶນ ຢູ່ໃນລະຫວ່າງ ສິບສອງ ຫາ ຕ່ຳກວ່າຊາວສ່ວນຮ້ອຍ;
2. ລະເວັ້ນການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ເປັນແຕ່ລະວັນ ໜຶ່ງວັນ ຫາ ສອງວັນ ລັດຖະການ;
3. ຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ບໍ່ຖືກຕ້ອງ ໜຶ່ງວັນ ລັດຖະການ;
4. ລາຍງານການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ຊັກຊ້າ ໜຶ່ງວັນ ຫາ ສອງວັນ ລັດຖະການ;
5. ນຳສົ່ງແຜນການແກ້ໄຂບັນຫາ ກ່ຽວກັບອັດຕາສ່ວນຄວາມພຽງພໍຂອງທຶນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 5 ຂໍ້ 2.3 ຂອງລະບຽບສະບັບນີ້ ຊັກຊ້າ ໜຶ່ງວັນ ຫາ ສອງວັນ ລັດຖະການ.

**ມາດຕາ 11 ມາດຕະການປັບໃໝ**

ບໍລິສັດຫຼັກຊັບ, ສະມາຊິກສະພາບໍລິຫານ ແລະ ພະນັກງານ ຂອງບໍລິສັດຫຼັກຊັບ ທີ່ລະເມີດຂໍ້ຫ້າມ ໃນມາດຕາ 7 ແລະ ຂໍ້ກຳນົດອື່ນຕາມການກຳນົດໄວ້ໃນລະບຽບສະບັບນີ້ ຈະຖືກປັບໃໝ ຕາມແຕ່ລະກໍລະນີ ດັ່ງນີ້:

1. ລະເວັ້ນການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ເປັນແຕ່ລະວັນ ນັບແຕ່ ສາມວັນ ລັດຖະການຂຶ້ນໄປ ຈະຖືກປັບໃໝ ສິບລ້ານກີບຕໍ່ວັນ;
2. ຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ບໍ່ຖືກຕ້ອງ ສອງວັນ ລັດຖະການຂຶ້ນໄປ ຈະຖືກປັບໃໝ ຫ້າລ້ານກີບຕໍ່ວັນ;
3. ລາຍງານການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ຊັກຊ້າ ແຕ່ ສາມວັນ ຫາ ຫ້າວັນ ລັດຖະການ ຈະຖືກປັບໃໝ ສາມລ້ານກີບຕໍ່ວັນ;
4. ລາຍງານການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ຊັກຊ້າ ແຕ່ ຫ້າວັນ ລັດຖະການ ຂຶ້ນໄປ ຫຼື ບໍ່ລາຍງານ ຈະຖືກປັບໃໝ ສິບລ້ານກີບຕໍ່ວັນ;
5. ສົ່ງແຜນການແກ້ໄຂບັນຫາ ອັດຕາສ່ວນຄວາມພຽງພໍຂອງທຶນ ຊັກຊ້າ ແຕ່ ສາມວັນ ຫາ ຫ້າວັນ ລັດຖະການ ຈະຖືກປັບໃໝ ຫ້າລ້ານກີບຕໍ່ວັນ;
6. ສົ່ງແຜນການແກ້ໄຂບັນຫາ ອັດຕາສ່ວນຄວາມພຽງພໍຂອງທຶນ ຊັກຊ້າ ຫຼື ບໍ່ສົ່ງ ແຕ່ ຫ້າວັນ ລັດຖະການຂຶ້ນໄປ ຈະຖືກປັບໃໝ ສິບລ້ານກີບຕໍ່ວັນ;
7. ແກ້ໄຂບັນຫາອັດຕາສ່ວນຄວາມພຽງພໍຂອງທຶນ ຊັກຊ້າ ບໍ່ທັນເວລາຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະຖືກປັບໃໝ ສິບຫ້າລ້ານກີບຕໍ່ວັນ;
8. ອັດຕາສ່ວນຄວາມພຽງພໍຂອງທຶນ ຕ່ຳກວ່າ ສິບສອງສ່ວນຮ້ອຍ ຈະຖືກປັບໃໝ ຫ້າລ້ານກີບຕໍ່ວັນ.

**ມາດຕາ 12 ມາດຕະການໂທດເພີ່ມ**

ບໍລິສັດຫຼັກຊັບ ຈະຖືກປະຕິບັດມາດຕະການໂທດເພີ່ມ ດັ່ງນີ້:

1. ຫ້າມຂະຫຍາຍສາຂາ, ໜ່ວຍບໍລິການ ແລະ ຫ້ອງການຜູ້ຕາງໜ້າ ກໍລະນີ ອັດຕາສ່ວນຄວາມພຽງພໍຂອງທຶນ ຂອງບໍລິສັດຫຼັກຊັບ ຕໍ່າກວ່າ ຊາວສ່ວນຮ້ອຍ;
2. ຈຳກັດ ຫຼື ໂຈະການເຄື່ອນໄຫວທຸລະກິດດ້ານຫຼັກຊັບ ບາງສ່ວນ ຫຼື ທັງໝົດ ກໍລະນີ ອັດຕາສ່ວນຄວາມພຽງພໍຂອງທຶນ ຂອງບໍລິສັດຫຼັກຊັບ ຕໍ່າກວ່າ ສິບສອງສ່ວນຮ້ອຍ ເປັນເວລາ ຫົກເດືອນ ຕິດຕໍ່ກັນ ຫຼື ອັດຕາສ່ວນຄວາມພຽງພໍຂອງທຶນ ຕໍ່າກວ່າ ຫຼື ເທົ່າກັບສູນສ່ວນຮ້ອຍ ຫຼື ບໍ່ສາມາດແກ້ໄຂບັນຫາອັດຕາສ່ວນຄວາມພຽງພໍຂອງທຶນ ຕາມແຜນການແກ້ໄຂ ທີ່ໄດ້ກຳນົດໄວ້.

## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 13 ການຈັດຕັ້ງປະຕິບັດ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ບໍລິສັດຫຼັກຊັບ, ສະມາຊິກສະພາບໍລິຫານ ແລະ ພະນັກງານຂອງບໍລິສັດຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ລະບຽບການສະບັບນີ້ ຕາມຂອບເຂດ ສິດ ແລະ ໜ້າທີ່ ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 14 ຜົນສັກສິດ**

ລະບຽບສະບັບນີ້ ມີຜົນສັກສິດນັບແຕ່ວັນ ລົງລາຍເຊັນເປັນຕົ້ນໄປ.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ**

ສົມສະຫວາດ ເລັ່ງສະຫວັດ